# ຈົດໝາຍຂອບໃຈ

ຮຽນ: ອົງການ ມິເລະນິອະມຸ ປຸໄລະມິຊຸ ຊະປານ

ຂ້າພະເຈົ້າຊື່ ທ່ານ ອາຈານ ຄຳພັນ ສາຍໝູພອນ ຜູ້ອຳນວຍການໂຮງຮຽນ ມ.ສ ອຸດົມວິໄລ ເມືອງ ໄກສອນ ພົມວິຫານ ແຂວງ ສະຫວັນນະເຂດ ຂໍຕາງໜ້າໃຫ້ຄະນະ,ຄູ-ອາຈານ ແລະ ນັກຮຽນ ໂຮງຮຽນ ມ.ສ ອຸດົມວິໄລ ສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈມາຍັງ ອົງການ ມິເລະນິອະມຸ ປຸໄລະມິຊຸ ຊະປານ ທີ່ໄດ້ສົ່ງ ປື້ມ Sudoku 30 ຫົວ ມາໃຫ້ໂຮງຮຽນພວກຂ້າພະເຈົ້າ,ເຊິ່ງໄດ້ຮັບເປັນທີ່ຮຽບຮ້ອຍແລ້ວແຕ່ວັນທີ 05/04/2011 ທີ່ຜ່ານມາ.

ໃນມື້ທຳອິດທີ່ເປີດແກັດເພື່ອກວດກາເບິ່ງເຄື່ອງ ໂດຍ ທ່ານ ຢູຕະ ໂຍນະດະ ອາສາສະໝັກ ໄຈກາ (jica) ປະຈຳໃນໂຮງຮຽນ ພ້ອມດ້ວຍຄູ-ອາຈານ ແລະ ນ້ອງນັກຮຽນຈຳນວນໜຶ່ງ ໄດ້ພາກັນມາເບິ່ງດ້ວຍຄວາມສົນໃຈ ແລະ ມີຄວາມດີໃຈຫຼາຍຫາອັນປຽບບໍ່ໄດ້,ຂ້າພະເຈົ້າ ຂໍຕາງໜ້າໃຫ້ຄູ-ອາຈານ ແລະ ນ້ອງນັກຮຽນ ຂໍໃຫ້ຄຳສັນຍາວ່າ: ຈະປົກປັກຮັກສາ ແລະ ນຳໃຊ້ເຂົ້າໃນກິດຈະກຳການຮຽນ-ການສອນໃຫ້ເກີດປະໂຫຍດຢ່າງກ້ວາງຂວາງ.

ທ້າຍສຸດນີ້ ພວກຂ້າພະເຈົ້າຂໍສະແດງຄວາມຂອບອົກຂອບໃຈເປັນຢ່າງສູງມາຫາງ ອົງການ ມິເລະນິອະມຸ ປຸໄລະມິຊຸ ຊະປານ ຂໍອວຍພອນໄຊອັນປະເສີດໃຫ້ພວກທ່ານ ຈົ່ງມີສຸຂະພາບແຂງແຮງ,ມີຄວາມສຸກຄວາມຈະເລີນໃນພາລະໜ້າທີ່ການງານ-ຄອບຄົວ ແລະ ເຮັດສຳເລັດໜ້າທີ່ທຸກປະການ.

ດ້ວຍຄວາມເຄົາລົບ ແລະ ນັບຖື.

ທີ່ ມ.ສ ອຸດົມວິໄລ,ວັນທີ 03 MAY 2011

ຜູ້ອຳນວຍການໂຮງຮຽນ

ໂຮງຮຽນ ມັດທະຍົມສົມບູນ ອຸດົມວິໄລ

ຄຳພັນ ສາຍໝູພອນ